ຍາເອື້ອຍແກ້ວຕາເອີຍ !

ຄວາມທຸກມັນອັ່ງແໜ້ນ ແຄ້ນຄັ່ງໃນຊວງ
ເປັນຫ່ວງນຳສັກສີ ກຽດທີ່ມີຢ້ານສູນຊິ້ນ
ໄດ້ຍິນຫຼາຍຄົນຮ້ອງ ຄອງຄອຍຍາມນ້ອງຈາກ
ພາກໄປໄກບໍ່ໄດ້ ໃຈນ້ອງຢາກແຕ່ງກອນ ເອື້ອຍເອີຍ

ແຕ່ຢ້ານຜົນສະທ້ອນ ຍ້ອນສູ່ສັງຄົມ
ຈຶ່ງຕອມຕົມໃຈໜີ ຫ່າງເວທີກວ້າງ
ຝືນເດີນທາງສາຍນີ້ ບັນຫາມີຢ້ານເສັຍຊື່
ຢ້ານໂລກລືຊ່າກ້ອງ ຫຼັກເຈັດນ້ອງຈຶ່ງດ່ວນໄປ

ເອື້ອຍແກ້ວຕາຈຶ່ງໄດ້ ຢືນຄຽງຄູ່ສີພັນດອນ
ນາງອາທອນຢູ່ຄົນດຽວ ປ່ຽວໃຈທາງນ້ອງ
ໜອງບໍ່ມີຂອນຂວ້າງ ພານແຫເຂົ້າຊິຫວ່ານ ລົງແລ້ວ
ເປັນວັງ ຄັນບໍ່ມີເງືອກເຝົ້າ ຄົນໃບ້ກໍບໍ່ຢ້ຳ ເອື້ອຍເອີຍ

ຝາກຕົວນຳຜູ້ຮູ້ ຄວາມເປັນຢູ່ຂອງຍິງ
ໃຈຈິງດອນຂໍຍົກ ເອື້ອຍສູງສເນີດ້ານ
ຍາເອື້ອຍງາມທັງໃຈກ້າ ວາຈາວາດກໍຄ່ອງ
ສິ່ງໃດນ້ອງພາດພັ້ງ ອະພັຍໃຫ້ແກ່ດອນ ແດ່ທ້ອນ

ແດ່ຍາເອື້ອຍແກ້ວຕາ ພົມມະຣິນ
ທ່ານອາຈານຍິງທີ່ພຽບພ້ອມໄປດ້ວຍຄວາມເປັນກຸລສັຕຣີລາວ
ທີ່ສົມຄວນຍົກໃຫ້ເປັນແຫວ່ນແຍງຂອງຊາວຫຼັກເຈັດ.

ຂໍຂອບໃຈທີ່ຍາເອື້ອຍເປັນຫ່ວງຖາມຂ່າວຄາວນໍາເອື້ອຍຂັນເງິນໃນ
ລະຍະທີ່ນ້ອງກໍາລັງສັບສົນແລະພັກຜ່ອນໃຈຢູ່. ແຕ່ເວລານີ້ຈິດໃຈສວ່າງ
ຂຶ້ນມາຫຼາຍແລ້ວ .

ສີພັນດອນ ດອກບົວກາງວັນ